**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ເລກທີ 1402 /ຫສນຍ

ນະຄອນຫຼວງວຽງຈັນ, ວັນທີ 30 ຕຸລາ 2021

# ແຈ້ງການ

**ຮຽນ:** - ບັນດາທ່ານ ລັດຖະມົນຕີ, ຫົວໜ້າອົງການທຽບເທົ່າ ທີ່ນັບຖື.

- ທ່ານ ເຈົ້າຄອງນະຄອນຫຼວງວຽງຈັນ ແລະ ບັນດາທ່ານເຈົ້າແຂວງທົ່ວປະເທດ ທີ່ນັບຖື.

**ເລື່ອງ:** ການສືບຕໍ່ປະຕິບັດມາດຕະການປ້ອງກັນ, ຄວບຄຸມ ແລະ ສະກັດກັ້ນການລະບາດຂອງພະຍາດ COVID-19 ໃນໄລຍະວັນທີ 31 ຕຸລາ - 14 ພະຈິກ 2021.

- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 574/ນຍ, ລົງວັນທີ 28 ກັນຍາ 2021;
- ອີງຕາມ ຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 15/ນຍ, ລົງວັນທີ 21 ເມສາ 2021;
- ອີງຕາມແຈ້ງການ ສະບັບເລກທີ 56/ຫສພ, ລົງວັນທີ 22 ກັນຍາ 2021 ຂອງຫ້ອງວ່າການສູນກາງພັກ;
- ອີງຕາມ ຄວາມເປັນເອກະພາບ ຂອງກອງປະຊຸມລັດຖະບານ ສະໄໝສາມັນ ປະຈຳເດືອນຕຸລາ 2021 ທີ່ຈັດຂຶ້ນໃນວັນທີ 29 ຕຸລາ 2021.

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຂໍຖືເປັນກຽດແຈ້ງມາຍັງທ່ານ ຊາບວ່າ: **ອີງຕາມການປະເມີນສະພາບການລະບາດ ແລະ ການຈັດຕັ້ງປະຕິບັດມາດຕະການຕ່າງໆ ໃນຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 15/ນຍ, ລົງວັນທີ 21 ເມສາ 2021, ແຈ້ງການ ສະບັບເລກທີ 1330/ຫສນຍ, ລົງວັນທີ 15 ຕຸລາ 2021 ແລະ ມາດຕະການຕ່າງໆ ທີ່ຄະນະສະເພາະກິດ ເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ຂັ້ນສູນກາງໄດ້ວາງອອກ ເຫັນວ່າ ໂດຍລວມແລ້ວການຈັດຕັ້ງທຸກຂັ້ນ ຕະຫຼອດຮອດທົ່ວປວງຊົນລາວທັງຊາດ ລ້ວນແຕ່ຈັດຕັ້ງປະຕິບັດ ຢ່າງເປັນຂະບວນການທີ່ກວ້າງຂວາງ. ແຕ່ເຖິງຢ່າງໃດກໍຕາມ ສະພາບການລະບາດໃນຊຸມຊົນທົ່ວປະເທດ ຍັງສືບຕໍ່ເພີ່ມຂຶ້ນ ແລະ ຂະຫຍາຍເປັນວົງກວ້າງເກືອບທຸກແຂວງ. ສະເພາະໃນເດືອນຕຸລານີ້ ມີຜູ້ຕິດເຊື້ອໃນຊຸມຊົນສະເລ່ຍເກືອບ 500 ຄົນຕໍ່ວັນ ທຽບໃສ່ເດືອນຜ່ານມາ ເພີ່ມຂຶ້ນ 27,6%. ສະນັ້ນ, ລັດຖະບານ ຈຶ່ງມີຄວາມຈຳເປັນຕ້ອງໄດ້ສືບຕໍ່ຈັດຕັ້ງປະຕິບັດມາດຕະການຕ່າງໆຄືດັ່ງໄລຍະຜ່ານມາ ເປັນສ່ວນໃຫຍ່, ຄຽງຄູ່ກັນນັ້ນ ກໍຈະໄດ້ມີມາດຕະການຜ່ອນຜັນຈຳນວນໜຶ່ງທີ່ມີຄວາມຈຳເປັນ ຕື່ມອີກ 15 ວັນຕໍ່ໜ້າ ໂດຍເລີ່ມແຕ່ເວລາ 00:00 ໂມງ ຂອງວັນທີ 31 ຕຸລາ ຫາ ເວລາ 24:00 ໂມງ ຂອງວັນທີ 14 ພະຈິກ 2021 ດັ່ງນີ້:**

1. <u>ຫຼັກການ ແລະ ເຫດຜົນຂອງການກຳນົດມາດຕະການຕ່າງໆຂອງລັດຖະບານ:</u>

   1.1 ລັດຖະບານ ໄດ້ພິຈາລະນາຖີ່ຖ້ວນ ແລະ ວາງເປົ້າໝາຍໃນການປ້ອງກັນ ແລະ ສະກັດກັ້ນການລະບາດຂອງພະຍາດ **COVID-19** ຢູ່ ສປປ ລາວ ເຮົາ ເພື່ອເຮັດແນວໃດບໍ່ໃຫ້ພົນລະເມືອງລາວ ກໍຄືຊາວຕ່າງດ້າວ ທີ່ອາໄສຢູ່ດິນແດນລາວ ຕິດເຊື້ອພະຍາດດັ່ງກ່າວ, ຖ້າຕິດກໍ່ໃຫ້ໜ້ອຍທີ່ສຸດ ແລະ ຖ້າເສຍຊີວິດ ກໍໃຫ້ມີໜ້ອຍທີ່ສຸດ.

1.2 ພະຍາຍາມຊີ້ນໍາ, ນໍາພາປະຊາຊົນບັນດາເຜົ່າເຮົາ ໃຫ້ຫັນປ່ຽນແບບແຜນການດໍາລົງຊີວິດຈາກອັນເປັນປົກກະຕິ ກ່ອນການລະບາດ ຂອງພະຍາດ **COVID-19** ກ້າວສູ່ການດໍາລົງຊີວິດປົກກະຕິແບບໃໝ່ ໃນເງື່ອນໄຂ **COVID-19.**

1.3 ແນວທາງໃນການຈັດຕັ້ງປະຕິບັດ ການດໍາລົງຊີວິດປົກກະຕິແບບໃໝ່ໃນເງື່ອນໄຂ **COVID-19** ຢູ່ ສປປ ລາວ ແມ່ນຕ້ອງສອດຄ່ອງກັບສະພາບ ແລະ ຈຸດພິເສດຂອງປະເທດເຮົາ ໂດຍທີ່ລັດຖະບານມີການຮຽນຮູ້ບົດຮຽນ ຂອງຕ່າງປະເທດ ເພື່ອນມິດສາກົນ, ຮັບຟັງຄໍາເຫັນທີ່ສ້າງສັນ ຂອງປະຊາຊົນເຮົາ ໃນແງ່ມຸມດ້ານຕ່າງໆແລ້ວ ໄດ້ພິຈາລະນາວ່າ: ພວກເຮົາຕ້ອງໄດ້ພະຍາຍາມສູງສຸດ ເພື່ອໃຫ້ມີການສົມດຸນ ແລະ ກົມກຽວກັນ ໃນ 3 ມາດຕະການ ລະຫວ່າງ "ມາດຕະການດ້ານການແພດ, ດ້ານການບໍລິຫານ ແລະ ດ້ານເສດຖະກິດ" ໝາຍຄວາມວ່າ ມາດຕະການຕ່າງໆ ທີ່ລັດຖະບານ ວາງອອກຕ້ອງຮັບປະກັນໄດ້ຄາດໝາຍການປ້ອງກັນພະຍາດ **COVID-19** ໃຫ້ມີຜູ້ຕິດເຊື້ອໜ້ອຍທີ່ສຸດ ແລະຖ້າເສຍຊີວິດກໍໜ້ອຍທີ່ສຸດ. ພ້ອມກັນນັ້ນ ກໍຕ້ອງໄດ້ຄໍານຶງເຖິງຜົນກະທົບທາງລົບ ຕໍ່ການພັດທະນາເສດຖະກິດ ແລະ ການດໍາລົງຊີວິດຂອງປະຊາຊົນ ໂດຍພະຍາຍາມສ້າງເງື່ອນໄຂໃຫ້ປະຊາຊົນ ໄດ້ທໍາມາຫາກິນ ແລະ ດໍາລົງຊີວິດປົກກະຕິໃນເງື່ອນໄຂໃໝ່ (ດໍາລົງຊີວິດປົກກະຕິແບບໃໝ່), ພ້ອມທັງສູ້ຊົນຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ **IX** ຂອງລັດຖະບານ. ບົນພື້ນຖານນັ້ນ, ອົງການປົກຄອງຂັ້ນຕ່າງໆ ຕ້ອງໄດ້ຄົ້ນຄ້ວາຜັນຂະຫຍາຍ ແລະ ຫັນເປັນແຜນປະຕິບັດຕົວຈິງໃຫ້ເປັນອັນລະອຽດ ທີ່ສອດຄ່ອງກັບສະພາບຈຸດພິເສດ ຂອງກົມກອງ ທ້ອງຖິ່ນຕົນ ໃນແຕ່ລະໄລຍະ.

2. <u>ມາດຕະການຕ້ອງເພີ່ມທະວີການຈັດຕັ້ງປະຕິບັດໃນບາງດ້ານ</u>:

ກ. ມາດຕະການລວມ:

1. ສືບຕໍ່ສຸມການສັກວັກຊີນໃຫ້ເປົ້າໝາຍຕ່າງໆ ຕາມແຜນການ ແລະ ຄາດໝາຍທີ່ໄດ້ວາງໄວ້ ດ້ວຍການກໍານົດແຜນອັນລະອຽດ, ມີແຜນຕິດຕາມທີ່ເປັນລະບົບຄົບຊຸດ ແລະ ດໍາເນີນໃຫ້ໄວຂຶ້ນກວ່າເກົ່າ; ສືບຕໍ່ຊອກຫາຜູ້ຕິດເຊື້ອມາປິ່ນປົວ ແລະ ນໍາເອົາຜູ້ສໍາຜັດໃກ້ຊິດກັບຜູ້ຕິດເຊື້ອມາກວດຫາເຊື້ອ ແລະ ຈໍາກັດບໍລິເວນ ໃນສະຖານທີ່ຕ່າງໆທີ່ກະກຽມໄວ້ ໃຫ້ຖືກຕ້ອງຕາມຫຼັກວິຊາການ.
2. ສືບຕໍ່ປິດດ່ານສາກົນ, ດ່ານທ້ອງຖິ່ນ ແລະ ດ່ານປະເພນີ ທາງບົກ ແລະ ທາງນໍ້າ ສໍາລັບບຸກຄົນທົ່ວໄປ ຍົກເວັ້ນຜູ້ທີ່ໄດ້ຮັບອະນຸຍາດຈາກຄະນະສະເພາະກິດຂັ້ນສູນກາງ. ສ່ວນພາຫະນະຂົນສົ່ງສິນຄ້າ ໃຫ້ປະຕິບັດຕາມມາດຕະການໃນຂໍ້ **3.10** ຂອງແຈ້ງການສະບັບນີ້.
3. ສືບຕໍ່ໂຈະການອອກວິຊາທ່ອງທ່ຽວ ແລະ ການມາຢ້ຽມຢາມຕ່າງໆຢູ່ ສປປ ລາວ ໃຫ້ແກ່ຄົນຕ່າງປະເທດ. ສໍາລັບນັກການທູດ, ພະນັກງານອົງການຈັດຕັ້ງສາກົນ, ຊ່ຽວຊານ, ນັກລົງທຶນ ທີ່ມີຄວາມຈໍາເປັນ ເພື່ອເຂົ້າມາປະຕິບັດວຽກງານຢູ່ສະຖານທູດ, ບັນດາກິດຈະການ ແລະ ໂຄງການຕ່າງໆທີ່ເປັນບຸລິມະສິດ ແມ່ນຕ້ອງໄດ້ຮັບອະນຸຍາດຈາກຄະນະສະເພາະກິດ ແລະ ປະຕິບັດຕາມມາດຕະການປ້ອງກັນການຕິດເຊື້ອ ແລະ ແຜ່ເຊື້ອຢ່າງເຂັ້ມງວດ. ສ່ວນການຈໍາກັດບໍລິເວນ ແມ່ນອະນຸຍາດ ໃຫ້ຂັ້ນເອກອັກຄະລັດຖະທູດ ແລະ ຫົວໜ້າອົງການຈັດຕັ້ງສາກົນ ນໍາໃຊ້ທີ່ພັກຂອງຕົນເອງໄດ້, ສ່ວນຂັ້ນຖັດລົງມາ ແມ່ນຕ້ອງໄດ້ຈໍາກັດບໍລິເວນຢູ່ໂຮງແຮມ ທີ່ຄະນະສະເພາະກິດ ກໍານົດໄວ້ເທົ່ານັ້ນ.

ຂ. ມາດຕະການສະເພາະໃນຈຸດທີ່ມີການລະບາດໃນຊຸມຊົນ:

1. ສືບຕໍ່ປິດກິດຈະການຮ້ານບັນເທີງ, ໂຮງສາຍຮູບເງົາ, ຮ້ານສະປາ, ຮ້ານຄາຣາໂອເກະ, ຮ້ານກິນດື່ມ, ຮ້ານອິນເຕີເນັດຄາເຟ, ຮ້ານສະນຸກເກີ, ກາຊີໂນ ແລະ ຮ້ານເກມທຸກປະເພດ ທົ່ວປະເທດ.
2. ສືບຕໍ່ປິດຮ້ານນວດ, ຮ້ານເສີມຄວາມງາມ, ຮ້ານຕັດຜົມ, ຮ້ານເສີມສວຍ, ສວນອາຫານ ແລະ ສະຖານທີ່ທ່ອງທ່ຽວ.
3. ປິດບັນດາໂຮງງານອຸດສາຫະກໍາ ແລະ ບັນດາວິສາຫະກິດ ຢູ່ເຂດທີ່ມີການລະບາດພາຍໃນໂຮງງານ ແລະ ໃນຊຸມຊົນ, ຍົກເວັ້ນ ໂຮງງານທີ່ໄດ້ຮັບອະນຸຍາດ ຈາກຄະນະສະເພາະກິດ, ໂຮງງານທີ່ຜະລິດສິນຄ້າບໍລິໂພກ, ຢາປົວພະຍາດ, ແລະ ອຸປະກອນການແພດ, ແຕ່ໃຫ້ມີການຄຸ້ມຄອງ ແລະ ຮັບປະກັນຕາມມາດຕະການທີ່ຄະນະສະເພາະກິດ ວາງອອກຢ່າງເຂັ້ມງວດ. ຖ້າຫົວໜ່ວຍທຸລະກິດໃດ ບໍ່ໃຫ້ການຮ່ວມມື ແລະ ປະຕິບັດ ຕໍ່ມາດຕະການປ້ອງກັນ, ຄວບຄຸມ ແລະ ແກ້ໄຂສະພາບການລະບາດ ຂອງພະຍາດ COVID-19 ຕ້ອງໂຈະຊົ່ວຄາວ ຈຶ່ງຈະພິຈາລະນາຄືນ.
4. ຫ້າມບຸກຄົນເດີນທາງເຂົ້າ-ອອກ ຕາມການກໍານົດ ຂອງຄະນະສະເພາະກິດ, ຍົກເວັ້ນຜູ້ທີ່ໄດ້ຮັບອະນຸຍາດຈາກຄະນະສະເພາະກິດ ແລະ ການຂົນສົ່ງສິນຄ້າ.
5. ປິດສູນກິລາໃນຮົ່ມ ແລະ ກາງແຈ້ງທຸກປະເພດ ລວມທັງ ຫ້າມຈັດການແຂ່ງຂັນກິລາທຸກປະເພດ ແລະ ຫ້າມອອກກໍາລັງກາຍຕາມສວນສາທາລະນະຕ່າງໆ.
6. ຫ້າມຈັດງານສັງສັນ ຫຼື ຊຸມແຊວທຸກຮູບແບບ ຢູ່ທຸກສະຖານທີ່.
7. ຫ້າມສວຍໂອກາດກັກຕຸນ ແລະ ຂຶ້ນລາຄາສິນຄ້າ ອຸປະໂພກ ແລະ ບໍລິໂພກ, ອຸປະກອນການແພດ ແລະ ສິນຄ້າອື່ນໆທີ່ຈໍາເປັນຕໍ່ການດໍາລົງຊີວິດປະຈໍາວັນ.
8. ປິດການສັນຈອນຂອງພາຫະນະ ຢູ່ ນະຄອນຫຼວງວຽງຈັນ ແລະ ບັນດາແຂວງທີ່ມີການລະບາດໃນຊຸມຊົນ ຕັ້ງແຕ່ເວລາ 23:00 ໂມງ - 05:00 ໂມງເຊົ້າ, ຍົກເວັ້ນລົດຂົນສົ່ງສິນຄ້າ, ສະບຽງອາຫານ, ອຸປະກອນການແພດ, ລົດຂົນສົ່ງຄົນເຈັບ, ລົດດັບເພີງ, ລົດກູ້ໄພ, ລົດຄະນະສະເພາະກິດ, ລົດຂອງເຈົ້າໜ້າທີ່ປະຕິບັດງານ ແລະ ລົດທີ່ໄດ້ຮັບອະນຸຍາດຈາກຄະນະສະເພາະກິດ.
9. ປິດການຮຽນການສອນ ສໍາລັບການສຶກສາທຸກຂັ້ນທຸກສາຍ ໃນແຂວງ, ເມືອງທີ່ມີການລະບາດໃນຊຸມຊົນ, ຍົກເວັ້ນບັນດາໂຮງຮຽນທີ່ມີເງື່ອນໄຂ ແລະ ມາດຕະຖານໃນການປ້ອງກັນ ແລະ ຄວບຄຸມການລະບາດຂອງເຊື້ອພະຍາດ ທີ່ໄດ້ຜ່ານການກວດກາ, ຢັ້ງຢືນ ແລະ ອະນຸຍາດຈາກຄະນະສະເພາະກິດ.
10. ຫ້າມຈັດກອງປະຊຸມ, ໂຮມຊຸມນຸມ ຫຼື ຈັດກິດຈະກໍາຕ່າງໆ ທີ່ມີຜູ້ເຂົ້າຮ່ວມ ຫຼາຍກວ່າ 50 ຄົນ ເປັນຕົ້ນ ກິດຈະກໍາທາງສາສະໜາ, ງານບຸນປະເພນີ, ງານດອງ; ກໍລະນີຈໍາເປັນຕ້ອງຈັດກອງປະຊຸມ ແລະ ງານລ້ຽງທາງການ ແມ່ນໃຫ້ຂໍອະນຸຍາດຈາກຄະນະສະເພາະກິດຂັ້ນສູນກາງ ຫຼື ຂັ້ນແຂວງ. ສໍາລັບບັນດາກະຊວງ-ອົງການທຽບເທົ່າທີ່ຈະດໍາເນີນກອງປະຊຸມໃຫຍ່ ຂອງອົງຄະນະພັກຕົນ ແມ່ນໃຫ້ສະເໜີແຜນປ້ອງກັນ ແລະ ຄວບຄຸມ ພະຍາດ COVID -19 ໃນໄລຍະດໍາເນີນກອງປະຊຸມ, ແລ້ວສະເໜີຫາຄະນະສະເພາະກິດ ພິຈາລະນາເປັນແຕ່ລະກໍລະນີ.
11. ໃຫ້ບັນດາກະຊວງ, ອົງການທຽບເທົ່າ, ວິສາຫະກິດ ຢູ່ນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ອະນຸຍາດໃຫ້ພະນັກງານ ແລະ ລັດຖະກອນ ຜັດປ່ຽນກັນມາປະຈໍາການ ຫຼື ເຮັດວຽກຢູ່ເຮືອນ ຜ່ານ

ລະບົບເອເລັກໂຕຣນິກ, ສຳລັບຜູ້ທີ່ມີຄວາມສ່ຽງ ແລະ ຜູ້ຍິງຖືພາ ທີ່ບໍ່ສາມາດຮັບວັກຊີນໄດ້ ແມ່ນໃຫ້ເຮັດວຽກຢູ່ເຮືອນ.

3. <u>ມາດຕະການສືບຕໍ່ຜ່ອນຜັນ</u> :

3.1. ສືບຕໍ່ອະນຸຍາດໃຫ້ເປີດ ຮ້ານຂາຍຍົກ-ຂາຍຍ່ອຍ, ຮ້ານຊຸບເປີມາເກັດ, ຮ້ານມິນິມາດ, ຕະຫຼາດສົດ, ຕະຫຼາດຂາຍອາຫານ ໂດຍໃຫ້ປະຕິບັດມາດຕະການປ້ອງກັນການຕິດເຊື້ອ ແລະ ແຜ່ເຊື້ອ ດ້ວຍການວັດແທກອຸນຫະພູມ, ຮັກສາໄລຍະຫ່າງຢ່າງໜ້ອຍ 01 ແມັດ, ໃສ່ຜ້າອັດປາກ-ດັງ, ລ້າງມືດ້ວຍນ້ຳສະອາດ ໃສ່ສະບູ ຫຼື ເຈວລ້າງມື, ມີການຈັດສັນທາງເຂົ້າ-ອອກໃຫ້ເປັນລະບຽບ ແລະ ໂດຍເປີດການບໍລິການຂອງຕົນ ແມ່ນບໍ່ເກີນເວລາ 21:00 ໂມງ ຢ່າງເດັດຂາດ.

3.2. ການຄົບງັນງານສົບ, ງານສິ່ງສະການ ແລະ ເຮັດບຸນແຈກທານ ແມ່ນໃຫ້ປະຕິບັດຕາມຄຳແນະນຳຂອງຄະນະສະເພາະກິດເລກທີ 4291/ສພກ, ລົງວັນທີ 15 ກັນຍາ 2021 ຢ່າງເຂັ້ມງວດ.

3.3. ສືບຕໍ່ອະນຸຍາດໃຫ້ເປີດຮ້ານຕັດຜົມ, ຮ້ານເສີມສວຍ, ຮ້ານນວດ ຢູ່ນອກເຂດແດງ ໂດຍເຈົ້າຂອງຮ້ານ, ພະນັກງານບໍລິການ ແລະ ຜູ້ມາໃຊ້ບໍລິການ ຕ້ອງໄດ້ຮັບວັກຊີນຄົບກ່ອນ ແລະ ໃຫ້ປະຕິບັດມາດຕະການປ້ອງກັນການຕິດເຊື້ອ ແລະ ແຜ່ເຊື້ອ ຢ່າງເຂັ້ມງວດ. ໃຫ້ເປີດບໍລິການບໍ່ເກີນ 19:00 ໂມງ ຢ່າງເດັດຂາດ.

3.4. ສືບຕໍ່ອະນຸຍາດໃຫ້ເປີດຮ້ານອາຫານ ແລະ ຮ້ານກາເຟ ຢູ່ເຂດທີ່ບໍ່ມີການລະບາດໃນຊຸມຊົນ ໂດຍອະນຸຍາດໃຫ້ນັ່ງກິນ-ດື່ມ ໃນສະຖານທີ່ບໍລິການດັ່ງກ່າວໄດ້, ແຕ່ໃຫ້ຈັດບ່ອນນັ່ງໃຫ້ມີໄລຍະຫ່າງ 01 ແມັດ ຂຶ້ນໄປ ທັງບໍ່ໃຫ້ບໍລິການເຄື່ອງດື່ມທີ່ມີທາດເຫຼົ້າທຸກປະເພດ ຢ່າງເດັດຂາດ (ນອກຈາກຊື້ໄປບໍລິໂພກຢູ່ຄອບຄົວໃຜລາວ) ແລະ ຕ້ອງປະຕິບັດມາດຕະການປ້ອງກັນການຕິດເຊື້ອ ແລະ ແຜ່ເຊື້ອຢ່າງເຂັ້ມງວດ. ພ້ອມກັນນີ້, ເຈົ້າຂອງຮ້ານ, ພະນັກງານ ແລະ ລູກຄ້າ ທີ່ມານັ່ງກິນ-ດື່ມທຸກຄົນຕ້ອງໄດ້ຮັບວັກຊີນຄົບ. ສຳລັບຈຸດທີ່ມີການລະບາດ ແມ່ນອະນຸຍາດໃຫ້ຊື້ອາຫານຕ່າງໆ ກັບເມືອເຮືອນເທົ່ານັ້ນ.

3.5. ອະນຸຍາດໃຫ້ເປີດໂຮງຈັກໂຮງງານ ແລະ ວິສາຫະກິດ ຢູ່ໃນເຂດທີ່ບໍ່ມີການລະບາດໃນຊຸມຊົນ ເພື່ອດຳເນີນກິດຈະການໄດ້ ໂດຍພະນັກງານ, ກຳມະກອນ ຕ້ອງໄດ້ຮັບວັກຊີນຄົບກ່ອນ ແລະ ບໍ່ໄດ້ພັກພາອາໄສຢູ່ພື້ນທີ່ ທີ່ມີການລະບາດໃນຊຸມຊົນ (ເຂດແດງ). ສຳລັບໂຮງງານໃດ ທີ່ມີເງື່ອນໄຂ ກໍໃຫ້ຈັດທີ່ພັກອາໄສກັບທີ່ໃຫ້ແຮງງານຂອງຕົນ ເພື່ອຫຼຸດຜ່ອນຄວາມສ່ຽງໃນການຕິດເຊື້ອ. ໃຫ້ສ້າງແຜນການປ້ອງກັນລະອຽດແລ້ວ ຂໍອະນຸຍາດ ຈາກຄະນະສະເພາະກິດທີ່ກ່ຽວຂ້ອງ.

3.6. ສືບຕໍ່ອະນຸຍາດໃຫ້ຈັດກອງປະຊຸມ ຢູ່ສະຖານທີ່ ໃນເຂດທີ່ບໍ່ມີການລະບາດໃນຊຸມຊົນ ແຕ່ທຸກຄົນທີ່ເຂົ້າຮ່ວມປະຊຸມ ຕ້ອງໄດ້ຮັບວັກຊີນຄົບ ແລະ ຕ້ອງປະຕິບັດຕາມມາດຕະການ ຂອງຄະນະສະເພາະກິດ ວາງອອກຢ່າງເຂັ້ມງວດ ເປັນຕົ້ນ ແທກອຸນຫະພູມ, ການຮັກສາໄລຍະຫ່າງ ຢ່າງໜ້ອຍ 01 ແມັດ, ໃສ່ຜ້າອັດປາກ-ດັງ, ລ້າງມືດ້ວຍນ້ຳສະອາດ ໃສ່ສະບູ ຫຼື ເຈວລ້າງມື, ໄດ້ຮັບວັກຊີນຄົບ ໂດຍບໍ່ກວດຫາເຊື້ອພະຍາດ COVID-19. ກໍລະນີ ການຈັດປະຊຸມຢູ່ຕ່າງແຂວງ ແມ່ນຕ້ອງຂໍອະນຸຍາດຄະນະສະເພາະກິດແຂວງດັ່ງກ່າວ ລ່ວງໜ້າ.

3.7. ສືບຕໍ່ອະນຸຍາດໃຫ້ນຳໃຊ້ເຮືອຫາປາ ເພື່ອຫາປາຕາມລຳນ້ຳເຂດຊາຍແດນລະຫວ່າງປະເທດ ໃນໄລຍະເວລາ ແຕ່ 06:00 ໂມງ ຫາ 18:00 ໂມງ ໂດຍໃຫ້ອົງການປົກຄອງທ້ອງຖິ່ນ ສົມທົບກັບ ກຳລັງ ປກຊ-

ປກສ ຢູ່ແຕ່ລະພື້ນທີ່ ອອກລະບຽບການຄຸ້ມຄອງ, ກຳນົດຈຳນວນເຮືອຫາປາ ກ່ອນອອກເຄື່ອນໄຫວແຕ່ລະມື້ ໂດຍໃຫ້ມີການບັນທຶກການປ່ອຍອອກ ແລະ ບັນທຶກການເຂົ້າມາຈອດ, ພ້ອມນັ້ນ ກໍ່ໃຫ້ຕິດຕາມ ກວດກາ ການຈັດຕັ້ງປະຕິບັດ ຢ່າງໃກ້ຊິດ ແລະ ເຂັ້ມງວດ.

3.8. ສືບຕໍ່ອະນຸຍາດໃຫ້ເດີນທາງເຂົ້າ-ອອກ ຢູ່ພາຍໃນທ້ອງຖິ່ນ ທີ່ບໍ່ມີການລະບາດໃນຊຸມຊົນ ໄດ້ປົກກະຕິ.

3.9. ສືບຕໍ່ອະນຸຍາດໃຫ້ດຳເນີນການຂົນສົ່ງໂດຍສານທາງບົກ, ທາງນ້ຳ ແລະ ທາງອາກາດ ລະຫວ່າງ ແຂວງຫາແຂວງ, ແຂວງ ຫາ ນະຄອນຫຼວງວຽງຈັນ, ເມືອງຫາເມືອງ ໂດຍບໍ່ມີການຈຳກັດບໍລິເວນ, ແຕ່ຜູ້ໃຫ້ບໍລິການ ແລະ ຜູ້ໂດຍສານທຸກຄົນ ຕ້ອງແມ່ນຜູ້ທີ່ໄດ້ສັກວັກຊີນຄົບໂດສ ແລະ ຕ້ອງປະຕິບັດມາດຕະການປ້ອງກັນ ແລະ ຄວບຄຸມການລະບາດຂອງພະຍາດ COVID-19 ຢ່າງເຂັ້ມງວດ; ສຳລັບຄົນຕ່າງປະເທດທີ່ເດີນທາງເຂົ້າ ສປປ ລາວ ມີຈຸດປະສົງເດີນທາງໄປແຂວງອື່ນ ຕ້ອງແຈ້ງໜັງສືເດີນທາງ, ໃບຢັ້ງຢືນການຈຳກັດບໍລິເວນ ຄົບ 14 ວັນ ແລະ ໜັງສືອະນຸຍາດຈາກຄະນະສະເພາະກິດຂັ້ນສູນກາງ ໃຫ້ເຈົ້າໜ້າທີ່ກ່ຽວຂ້ອງ ໂດຍບໍ່ໃຫ້ມີການຈຳກັດບໍລິເວນ ຢູ່ແຂວງປາຍທາງ. ຍົກເວັ້ນຄົນຕ່າງປະເທດທີ່ເຮັດວຽກ ຫຼື ໄດ້ດຳລົງຊີວິດ ຢູ່ ສປປ ລາວ ມາໄລຍະໜຶ່ງແລ້ວ ແມ່ນໃຫ້ປະຕິບັດຄືກັນກັບພົນລະເມືອງລາວ.

- ສຳລັບຜູ້ໂດຍສານ ແລະ ຜູ້ຂັບຂີ່ລົດ ເຂົ້າ-ອອກ ແຂວງທີ່ມີການລະບາດໃນຊຸມຊົນ ຕ້ອງໄດ້ຮັບອະນຸຍາດຈາກຄະນະສະເພາະກິດ ຈາກແຂວງຕົ້ນທາງ ແລະ ປາຍທາງ,

3.10. ສືບຕໍ່ອະນຸຍາດໃຫ້ຜູ້ຂັບລົດ ແລະ ພະນັກງານຂົນສົ່ງສິນຄ້າ ສາມາດສົ່ງສິນຄ້າເຂົ້າ-ອອກ ລະຫວ່າງ ແຂວງຫາ ແຂວງ ແລະ ນະຄອນຫຼວງວຽງຈັນ ຫາ ແຂວງປາຍທາງໄດ້ ໂດຍບໍ່ຈຳເປັນຕ້ອງຖ່າຍສິນຄ້າໃນໄລຍະເດີນທາງຢູ່, ບໍ່ຕ້ອງກວດຫາເຊື້ອພະຍາດ COVID-19 ແລະ ບໍ່ຈຳກັດບໍລິເວນ ຢູ່ແຂວງປາຍທາງ, ແຕ່ຕ້ອງປະຕິບັດມາດຕະການປ້ອງກັນການຕິດເຊື້ອ ແລະ ແຜ່ເຊື້ອທີ່ຄະນະສະເພາະກິດ ວາງອອກ ຢ່າງເຂັ້ມງວດ.

- ສືບຕໍ່ດຳເນີນກິດຈະການຂົນສົ່ງສິນຄ້າລະຫວ່າງປະເທດ ໂດຍປະຕິບັດຕາມມາດຕະການທີ່ລະບຸໄວ້ໃນແຈ້ງການ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ 242/ຍທຂ, ລົງວັນທີ 23 ເມສາ 2021 ຢ່າງເຂັ້ມງວດ ແລະ ເປັນເອກະພາບ, ພ້ອມດຽວກັນນັ້ນ ຄົນຂັບລົດສິນຄ້າລະຫວ່າງປະເທດ ທີ່ຈຳເປັນຕ້ອງຂັບລົດເຂົ້າມາໃນ ສປປ ລາວ ຕ້ອງໄດ້ຮັບວັກຊີນຄົບ.

3.11. ສືບຕໍ່ອະນຸຍາດໃຫ້ເປີດການຮຽນ-ການສອນ ສຳລັບການສຶກສາກ່ອນໄວຮຽນ, ສາມັນສຶກສາ, ການສຶກສາສົງ, ການສຶກສາພິເສດ, ອາຊີວະສຶກສາ, ວິທະຍາໄລ, ມະຫາວິທະຍາໄລ, ການສຶກສານອກໂຮງຮຽນ, ການສຶກສາຄູ, ການສຶກສາຊັ້ນສູງ ຢູ່ແຂວງທີ່ບໍ່ມີການລະບາດໃນຊຸມຊົນ ໂດຍໄດ້ຮັບອະນຸຍາດຈາກຄະນະສະເພາະກິດຂັ້ນແຂວງ, ຂັ້ນເມືອງ ແຕ່ຕ້ອງຈັດຫ້ອງຮຽນແບບຮັກສາໄລຍະຫ່າງ ແລະ ປະຕິບັດບັນດາມາດຕະການປ້ອງກັນ ແລະ ຄວບຄຸມການແຜ່ລະບາດຂອງພະຍາດ COVID-19 ຢ່າງເຂັ້ມງວດ. ແຕ່ອະນຸຍາດໃຫ້ໂຮງຮຽນກິນນອນ ທີ່ບໍ່ມີການເຄື່ອນຍ້າຍນັກຮຽນ-ນັກສຶກສາ ແລະ ພະນັກງານຄູອາຈານ ດຳເນີນການຮຽນ-ການສອນໄດ້ ໂດຍໂຮງຮຽນ ຕ້ອງປະຕິບັດມາດຕະການປ້ອງກັນ ແລະ ຄວບຄຸມ ການລະບາດຂອງ COVID-19 ຢ່າງເຂັ້ມງວດ ແລະ ໄດ້ຮັບອະນຸຍາດຈາກຄະນະສະເພາະກິດ ແຂວງ/ນະຄອນຫຼວງ.

3.12. ອະນຸຍາດໃຫ້ສາຍອາຊີວະສຶກສາ, ວິທະຍາໄລ ແລະ ມະຫາວິທະຍາໄລ ຈັດການສອບເສັງໃນຮູບແບບທາງໄກ ຫຼື ຮູບແບບທີ່ເໝາະສົມ.

3.13. ສືບຕໍ່ອະນຸຍາດໃຫ້ເປີດບໍລິການສູນກິລາໃນຮົ່ມ ແລະ ກາງແຈ້ງ ຢູ່ແຂວງ/ເມືອງທີ່ບໍ່ມີການລະບາດໃນຊຸມຊົນ. ແຕ່ຜູ້ໃຫ້ບໍລິການ ແລະ ນັກກິລາທຸກຄົນ ຕ້ອງໄດ້ຮັບວັກຊີນຄົບ, ຫ້າມບໍ່ໃຫ້ບໍລິການເຄື່ອງດື່ມທີ່ມີທາດເຫຼົ້າ ແລະ ປະຕິບັດຕາມມາດຕະການປ້ອງກັນ ແລະ ຄວບຄຸມການແຜ່ເຊື້ອ ທີ່ຄະນະສະເພາະກິດວາງອອກ ຢ່າງເຂັ້ມງວດ.

3.14. ໃຫ້ກະຊວງສາທາລະນະສຸກ ສົມທົບກັບ ກະຊວງສຶກສາທິການ ແລະ ກິລາ ຄົ້ນຄວ້າມາດຕະການ ແລະ ຂໍ້ແນະນຳກ່ຽວກັບການເປີດການຮຽນຄືນສຳລັບທຸກຊັ້ນຮຽນ ລວມທັງຊັ້ນປະຖົມ ແລະ ມັດທະຍົມສົມບູນ ຢູ່ນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ທີ່ມີການລະບາດໃນຊຸມຊົນ ໂດຍໃຫ້ກຳນົດເອົາສະຖານການສຶກສາທີ່ມີເງື່ອນໄຂ ແລະ ມີຄວາມພ້ອມເທົ່ານັ້ນ ແຕ່ຕ້ອງຜ່ານການກວດກາ ແລະ ຢັ້ງຢືນຈາກຄະນະສະເພາະກິດຂັ້ນນະຄອນຫຼວງວຽງຈັນ ແລະ ຂັ້ນແຂວງຄັກແນ່ ຈາກນັ້ນຈຶ່ງອະນຸມັດເປັນແຕ່ລະກໍລະນີ ເພື່ອເປັນການທົດລອງ.

4. ໃນບັນດາຫົວໜ່ວຍທຸລະກິດ, ສະຖານທີ່ ກໍຄື ກິດຈະການຕ່າງໆ ທີ່ໄດ້ຮັບອະນຸຍາດໃຫ້ເປີດ ແລະ ເຄື່ອນໄຫວທີ່ໄດ້ກ່າວມາໃນຂໍ້ 3.1 ຫາ 3.13 ນັ້ນ ແມ່ນໃຫ້ອີງໃສ່ເງື່ອນໄຂຂອງການສັກວັກຊີນຂອງຜູ້ເຂົ້າບໍລິການເປັນຕົ້ນຕໍ, ໝາຍວ່າ ຜູ້ທີ່ບໍ່ທັນສັກວັກຊີນ ແມ່ນບໍ່ໃຫ້ເຈົ້າຂອງສະຖານທີ່ອະນຸຍາດໃຫ້ເຂົ້າໃຊ້ບໍລິການ ຢ່າງເດັດຂາດ, ຍົກເວັ້ນຜູ້ຖືພາ ແລະ ຜູ້ທີ່ບໍ່ທັນເຖິງອາຍຸກະສຽນສັກວັກຊີນໄດ້.

5. ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງທີ່ລະເມີດມາດຕະການປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ທີ່ລັດຖະບານ ກໍຄື ຄະນະສະເພາະກິດແຕ່ລະຂັ້ນ ວາງອອກ ຕ້ອງຖືກດຳເນີນມາດຕະການຕ່າງໆ ຕາມກົດໝາຍ ແລະ ລະບຽບການກ່ຽວຂ້ອງ ຢ່າງເຂັ້ມງວດ ແລະ ຕາມກໍລະນີໜັກ ຫຼື ເບົາ.

6. ໃຫ້ທຸກຄົນທີ່ໄດ້ຮັບການສັກວັກຊີນຄົບໂດສ ລວມທັງບຸກຄົນ ທີ່ເດີນທາງເຂົ້າມາ ສປປ ລາວ ຕາມການອະນຸມັດຂອງຄະນະສະເພາະກິດຂັ້ນສູນກາງ ດຳເນີນການຕິດຕັ້ງ ແລະ ລົງທະບຽນ ໂປຣແກຣມ (ແອັບ) LaoKYC ລົງໃນໂທລະສັບມືຖືຂອງຕົນ ເພື່ອໃຊ້ບໍລິການ "ລາວ ສູ້ສູ້" ແລະ ສະໝັກສ້າງລະຫັດວັກຊີນ (Vaccine ID) ເພື່ອໃຊ້ເປັນບັດຢັ້ງຢືນການສັກວັກຊີນ ແລະ ສະຖານະຂອງຕົນ ໃນເວລາເຄື່ອນໄຫວພົວພັນວຽກງານຢູ່ສຳນັກງານຂອງລັດ ແລະ ເຂົ້າໃຊ້ບໍລິການຢູ່ຮ້ານຄ້າ ແລະ ສະຖານທີ່ຕ່າງໆ. ພ້ອມກັນນີ້ໃຫ້ບັນດາດ່ານຊາຍແດນ, ຈຸດກວດລະຫວ່າງແຂວງຕໍ່ແຂວງ, ບັນດາຮ້ານຄ້າ ແລະ ສະຖານທີ່ບໍລິການຕ່າງໆ ທີ່ອະນຸຍາດໃຫ້ເປີດບໍລິການ ດຳເນີນການຄື: (1) ສ້າງ QR-Code ສະຖານທີ່ຕົນ ຕິດໃສ່ທາງເຂົ້າ, ໂຕະປະຊຸມ ຫຼື ຈຸດທີ່ເປັນບ່ອນຊຸມນຸມ ເພື່ອໃຫ້ຜູ້ເດີນທາງເຂົ້າ-ອອກ ແລະ ຜູ້ໃຊ້ບໍລິການ ໄດ້ສະແກນ QR-Code ເພື່ອແຈ້ງເຂົ້າ (Check-in) ແລະ ກ່ອນເຂົ້າໃຊ້ບໍລິການ; (2) ມີພະນັກງານອຳນວຍຄວາມສະດວກ, ແນະນຳການນຳໃຊ້, ພ້ອມທັງສະແກນ QR-Code ລະຫັດວັກຊີນ ຂອງຜູ້ເຂົ້າມາໃຊ້ບໍລິການທຸກຄັ້ງ ເພື່ອຕິດຕາມ ແລະ ພິຈາລະນາອະນຸຍາດ ຫຼື ບໍ່ອະນຸຍາດ ໃຫ້ຜ່ານ ຫຼື ເຂົ້າ-ອອກສະຖານທີ່.

7. ມອບໃຫ້ ຄະນະສະເພາະກິດ COVID-19 ແຕ່ລະຂັ້ນ ສືບຕໍ່ຊີ້ນຳພາກສ່ວນກ່ຽວຂ້ອງ ເອົາໃຈໃສ່ວຽກງານຈຳນວນໜຶ່ງຄື ດັ່ງນີ້:

- ຮີບຮ້ອນຂຶ້ນແຜນການແຈກຢາຍ ແລະ ສັກວັກຊີນໃຫ້ກຸ່ມເປົ້າໝາຍຕ່າງໆ (ປະຊາຊົນ-ຊັ້ນຄົນຕ່າງໆ) ຢ່າງເປັນລະບົບ, ສະເໝີພາບ ແລະ ທົ່ວເຖິງ ທັງຮັບປະກັນບໍ່ໃຫ້ວັກຊີນເສຍຫາຍ ຫຼື ເສື່ອມຄຸນ ຢ່າງເດັດຂາດ;
- ສືບຕໍ່ຊີ້ນຳ ພາກສ່ວນກ່ຽວຂ້ອງ ໂຄສະນາ, ເຜີຍແຜ່ ແລະ ປຸກລະດົມ ໃຫ້ປະຊາຊົນ ແລະ ຜູ້ປະກອບການເຂົ້າໃຈ ແລະ ມີສ່ວນຮ່ວມໃນການປະຕິບັດມາດຕະການຕ່າງໆ ທີ່ລັດຖະບານ ແລະ ອົງການທ້ອງຖິ່ນວາງອອກຢ່າງເຄັ່ງຄັດ, ຄຽງຄູ່ກັນນັ້ນ ກໍໃຫ້ພະຍາຍາມອະທິບາຍໃຫ້ປະຊາຊົນບັນດາເຜົ່າ ມີວິທີການປ້ອງກັນຕົນເອງ ທັງຮຽນຮູ້ການດຳລົງຊີວິດແບບປົກກະຕິໃໝ່ ໃນເງື່ອນໄຂທີ່ມີການລະບາດຂອງພະຍາດ COVID-19 ຫຼື ເວົ້າອີກຢ່າງໜຶ່ງ ແມ່ນຮຽນຮູ້ທີ່ຈະຢູ່ຮ່ວມກັບພະຍາດ COVID-19 ໂດຍຜ່ານສື່ຕ່າງໆ (ໂທລະພາບວິທະຍຸ, ໂທລະໂຄ່ງ, ໜັງສືພິມ ແລະ ສື່ສັງຄົມອອນລາຍອື່ນໆ). ພ້ອມທັງປະສານສົມທົບກັບພາກສ່ວນຕ່າງໆ ເພື່ອປະເມີນສະພາບການຈັດຕັ້ງປະຕິບັດວຽກງານດັ່ງກ່າວ, ຖ້າມີຄວາມຈຳເປັນ ກໍຕ້ອງໄດ້ສະເໜີຂໍການສະໜັບສະໜູນເອົາອາສາສະໝັກ ຈາກອົງການຈັດຕັ້ງຕ່າງໆ ໂດຍສະເພາະແມ່ນ ກຳລັງຊາວໜຸ່ມ ເພື່ອປະກອບສ່ວນເຂົ້າໃນວຽກງານນີ້ຢ່າງທັນການ ແລະ ຮັບປະກັນຄວາມສະຫງົບປອດໄພ;
- ສືບຕໍ່ກະຊວງສູນກັກກັນ ແລະ ສູນປິ່ນປົວໃຫ້ພຽງພໍ ຕິດພັນກັບກະຊວງງົບປະມານສຳຮອງໄວ້ ເພື່ອຊື້ອຸປະກອນການແພດ, ວັກຊີນ, ຢາປົວພະຍາດ, ນ້ຳຢາກວດຫາເຊື້ອ ແລະ ອຸປະກອນຈຳເປັນຕ່າງໆ, ພ້ອມທັງປະຕິບັດນະໂຍບາຍ ໃຫ້ພະນັກງານແພດໝໍ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງທີ່ພວມປະຕິບັດໜ້າທີ່ວຽກງານດັ່ງກ່າວ ທັງໃຫ້ກຳລັງໃຈ ດ້ວຍຮູບການຕ່າງໆ. ໃນເວລາຈັດຕັ້ງປະຕິບັດວຽກງານຕົວຈິງ, ຖ້າມີບັນຫາຫຍຸ້ງຍາກ ຄະນະສະເພາະກິດ ກໍຄື ການຈັດຕັ້ງກ່ຽວຂ້ອງບ່ອນນັ້ນໆ ຮີບຮ້ອນປະສານກັບພາກສ່ວນກ່ຽວຂ້ອງ ແລະ ໃຫ້ແກ້ໄຂທັນການ.

8. ມອບໃຫ້ຄະນະສະເພາະກິດ COVID-19 ຂັ້ນສູນກາງ ເປັນເຈົ້າການໃນການຊີ້ນຳ, ແນະນຳທາງດ້ານເນື້ອໃນ ກໍຄືວິທີການ ໃນການຖະແຫຼງຂ່າວປະຈຳວັນໃຫ້ຫຼາກຫຼາຍ ເຂົ້າໃຈງ່າຍ, ເພື່ອໃຫ້ສັງຄົມ ຮັບຮູ້ ເຂົ້າໃຈຢ່າງທົ່ວເຖິງ, ມີສະຕິລະວັງຕົວ ແລະ ເປັນເຈົ້າການເຂົ້າຮ່ວມການປະຕິບັດບັນດາມາດຕະການຕ່າງໆ ທີ່ຄະນະສະເພາະກິດແຕ່ລະຂັ້ນ ວາງອອກ.

9. ໃຫ້ອົງການປົກຄອງນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ໃນທົ່ວປະເທດ ຊີ້ນຳພາກ ສ່ວນກ່ຽວຂ້ອງຂັ້ນຕົນ ເອົາໃຈໃສ່ຕື່ມ ດັ່ງນີ້:

- ໃຫ້ຮີບຮ້ອນຊີ້ນຳ ແລະ ຈັດຕັ້ງການສັກວັກຊີນໃຫ້ກຸ່ມເປົ້າໝາຍຕ່າງໆ ລວມທັງ ຢູ່ເຂດເທດສະບານ, ກຸ່ມບ້ານຕ່າງໆ ໃນທ້ອງຖິ່ນຕົນ ໃຫ້ໄດ້ຕາມແຜນການຂອງຂະແໜງວິຊາການ ວາງອອກ ເພື່ອຫຼຸດຜ່ອນການລະບາດ ແລະ ຄວາມຮຸນແຮງຂອງການລະບາດ ໂດຍໃຫ້ຖືເອົາວຽກງານການນຳພາ ແລະ ຈັດຕັ້ງການສັກວັກຊີນ ເປັນຄວາມຮັບຜິດຊອບຕົ້ນຕໍ ແລະ ສຳຄັນ ຂອງອົງການປົກຄອງທ້ອງຖິ່ນທຸກຂັ້ນ.
- ຮີບຮ້ອນຂະຫຍາຍຮູບແບບເອົາໂຮງແຮມເປັນສະຖານທີ່ປິ່ນປົວ ແລະ ສະຖານທີ່ປິ່ນປົວກັບທີ່ສຳລັບຜູ້ຕິດເຊື້ອທີ່ບໍ່ສະແດງອາການ ແລະ ມີເງື່ອນໄຂ, ພ້ອມທັງ ປະສານສົມທົບກັບພາກສ່ວນກ່ຽວຂ້ອງຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ ໃນການລະດົມຊ່ຽວຊານ, ແພດໝໍ ແລະ ເຈົ້າໜ້າທີ່ວິຊາສະເພາະດ້ານຕ່າງໆ ເພື່ອຊ່ວຍຮັບມືກັບການລະບາດ ພະຍາດດັ່ງກ່າວ ຕາມເງື່ອນໄຂຕົວຈິງ ຂອງແຕ່ລະທ້ອງຖິ່ນ.

10. ກໍລະນີມີແຮງງານ, ນັກສຶກສາ ແລະ ພະນັກງານ ຂອງລາວ ທີ່ເດີນທາງມາຈາກປະເທດໃກ້ຄຽງ ແລະ ໄດ້ຜ່ານການຈຳກັດບໍລິເວນຢູ່ສູນນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ຄົບ 14 ວັນແລ້ວ ໃຫ້ອົງການປົກຄອງທ້ອງຖິ່ນ ສືບຕໍ່ແນະນຳຄະນະສະເພາະກິດຂອງຕົນ ສືບຕໍ່ໄປຈຳກັດບໍລິເວນຕໍ່ເປົ້າໝາຍດັ່ງກ່າວ ຢູ່

ສູນຂອງເມືອງ ຫຼື ບ້ານ ຕື່ມອີກ 14 ວັນ ໃຫ້ຖືກຕ້ອງ ແລະ ເຂັ້ມງວດ, ຍົກເວັ້ນ ກໍລະນີທີ່ໄດ້ຈຳກັດບໍລິເວນຄົບ 14 ວັນ ຢູ່ໂຮງແຮມ ທີ່ຄະນະສະເພາະກິດຂັ້ນຕ່າງໆໄດ້ຮັບຮອງມາແລ້ວ.

11. ລັດຖະບານ ສືບຕໍ່ສົ່ງເສີມຄວາມມີນ້ຳໃຈເອື້ອເຟື້ອເພື່ອແຜ່ ເຊິ່ງກັນ ແລະ ກັນ ຂອງຄົນລາວ ທັງຊາດ ລວມທັງຊາວຕ່າງດ້າວ, ຜູ້ປະກອບການທຸລະກິດ ທັງພາຍໃນ ແລະ ຕ່າງປະເທດ ທີ່ທຳມາຫາກິນຢູ່ໃນ ສປປ ລາວ ໃນການປະກອບສ່ວນເຂົ້າໃນການປະຕິບັດນະໂຍບາຍ ແລະ ມາດຕະການຕ່າງໆ ທີ່ລັດຖະບານວາງອອກ ທັງຊ່ວຍເຫຼືອເຊິ່ງກັນ ແລະ ກັນ ດ້ວຍຮູບການຕ່າງໆ ລວມທັງທາງດ້ານສະຕິປັນຍາ, ວັດຖຸປັດໄຈ, ເຫື່ອແຮງ ແລະ ດຳເນີນ ໄປດ້ວຍຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍ.

12. ລັດຖະບານ ຮຽກຮ້ອງໃຫ້ພະນັກງານ, ນັກຮົບ, ປະຊາຊົນລາວບັນດາເຜົ່າ, ທຸກຊັ້ນຄົນ ຕະຫຼອດຮອດຊາວຕ່າງປະເທດ ທີ່ພວມປະຕິບັດໜ້າທີ່ ກໍຄືດຳລົງຊີວິດ ຢູ່ ສປປ ລາວ ຈົ່ງຮ່ວມແຮງຮ່ວມໃຈກັນ ປະຕິບັດມາດຕະການທີ່ຄະນະສະເພາະກິດແຕ່ລະຂັ້ນ ວາງອອກຢ່າງເຂັ້ມງວດ ດ້ວຍການເປັນຫູເປັນຕາ ຕິດຕາມສະພາບການຕ່າງໆ ໃນກໍລະນີພົບເຫັນມີຜູ້ລັກລອບເຂົ້າເມືອງ ແລະ ມີການລະເມີດມາດຕະການຕ່າງໆ ທີ່ຄະນະສະເພາະກິດວາງອອກ ກໍ່ໃຫ້ຮີບຮ້ອນລາຍງານຕໍ່ຄະນະສະເພາະກິດ ກໍຄືອົງການປົກຄອງທ້ອງຖິ່ນໃນຂັ້ນນັ້ນ ໂດຍໄວ ເພື່ອໃຫ້ການຈັດຕັ້ງກ່ຽວຂ້ອງດັ່ງກ່າວ ມີວິທີການແກ້ໄຂ ໃຫ້ທັນການ.

13. ມອບໃຫ້ບັນດາກະຊວງ, ອົງການທຽບເທົ່າ, ອົງການປົກຄອງທ້ອງຖິ່ນ ແລະ ຄະນະສະເພາະກິດທຸກຂັ້ນ ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດແຈ້ງການສະບັບນີ້ ໃຫ້ຖືກຕ້ອງ, ເປັນເອກະພາບ ແລະ ເຂັ້ມງວດ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ດ້ວຍ.

ລັດຖະມົນຕີ,
ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ຄຳເຈນ ວົງໂພສີ

<u>ບ່ອນນຳສົ່ງ:</u>

| | |
|---|---|
| 1. ນາຍົກ-ຮອງນາຍົກລັດຖະມົນຕີ | 04 ສະບັບ |
| 2. ອົງການຂົງເຂດ ພັກ-ລັດ | ບ່ອນລະ 01 ສະບັບ |
| 3. ສູນກາງແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ | ບ່ອນລະ 01 ສະບັບ |
| 4. ຄະນະເລຂາທິການສະພາແຫ່ງຊາດ | 01 ສະບັບ |
| 5. ຄະນະ ຫສນຍ, ທ່ານລະ | 01 ສະບັບ |
| 6. ສຳເນົາ | 01 ສະບັບ |